# ຄຳນຳ

ການກໍ່ສ້າງ ຜູ້ປະກອບກິດຈະການ ແມ່ນໜຶ່ງໃນນະໂຍບາຍພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຂອງລັດຖະບານ. ການຜັນຂະຫຍາຍຈັດຕັ້ງປະຕິບັດນະໂຍບາຍ ດັ່ງກ່າວຈະຕ້ອງດຳ ເນີນດ້ວຍຫຼາຍວິທີການ ແລະ ນຳໃຊ້ເຄື່ອງມືຫຼາຍຮູບແບບ ເພື່ອໃຫ້ສອດຄ່ອງກັບຄວາມຈຳເປັນ ຫຼື ຄວາມຕ້ອງການຂອງຜູ້ປະກອບ ກິດຈະການ ໃນແຕ່ລະລຳດັບ, ໃນແຕ່ລະທ້ອງຖິ່ນ ແລະ ໃນແຕ່ລະເພດ ແຕ່ລະໄວ.

ປະເທດພວກເຮົາ ຍັງຢູ່ໃນຈຸດລິເລີ່ມ ໃນການສົ່ງເສີມເພື່ອພັດທະນາ ວິສາຫະກິດຂະນາດນ້ອຍ ແລະ ກາງ ເຊິ່ງຢູ່ໃນໄລຍະທີ່ຫຼາຍໆປະເທດ ໃນພູມິພາກ ແລະ ໃນໂລກ ກຳລັງເພີ່ມຄວາມເອົາ ໃຈໃສ່ໃນການສົ່ງເສີມ ວິສາຫະກິດຂະໜາດນ້ອຍ ແລະ ກາງ, ເພາະສະນັ້ນບັນດາວິທີການ ແລະ ມາດຕະການຕ່າງໆ ຈຶ່ງໄດ້ຮັບ ການຄົ້ນຄ້ວາ ແລະ ພັດທະນາ ເພື່ອເປັນເຄື່ອງມືໃນການກະຕຸກຊຸກຍູ້ ແລະ ໃຫ້ການຊ່ວຍເຫຼືອວິສາຫະກິດ ຂະໜາດນ້ອຍ ແລະ ກາງ ເຊິ່ງເປັນໂອກາດທີ່ດີສຳລັບ ສ ປ ປ ລາວ ໃນການຮຽນຮູ້ ແລະ ເລືອກເຟັ້ນ ເພື່ອໃຫ້ ໄດ້ ວິທີການທີ່ດີເລີດ ( Best practice ) ແລະ ນຳໃຊ້ເປັນເຄື່ອງມື ໃນການພັດທະນາວິສາຫະກິດຂະໜາດ ນ້ອຍ ແລະ ກາງ ໃນປະເທດຕົນເອງ.

ປື້ມຄູ່ມື " ກ້າວໄປຂ້າງໜ້າສຳລັບແມ່ຍິງ ໃນວິສາຫະກິດ " ແມ່ນວິທີການໜຶ່ງທີ່ ອົງການແຮງງານສາກົນເປັນຜູ້ຄົ້ນຄ້ວາ ແລະ ສ້າງຂຶ້ນ ເພື່ອນຳໃຊ້ ຝຶກອົບຮົມ ຜູ້ປະກອບກິດຈະການ ເພດຍິງ ໃນ ວິສາຫະກິດຂະໜາດນ້ອຍ ຫຼື ວິສາຫະກິດ ໃນຄອບຄົວ, ໄດ້ຜ່ານການທົດລອງ ນຳໃຊ້ ຢູ່ ປະເທດ ໄທ ໃນປີ 2001 ແລະ ທົດ ສອບໃນ ສ ປ ປ ລາວ ແລະ ກຳປູເຈຍ.

ພວກເຮົາເຫັນວ່າ ປື້ມຄູ່ມື ການຝຶກອົບຮົມ ດັ່ງກ່າວນີ້ມີຄວາມເໝາະສົມ ນຳໃຊ້ ຢູ່ ສ ປ ປ ລາວ ເພາະເປັນ ວິທີການທີ່ເຂົ້າໃຈງ່າຍ, ອີງໃສ່ ບົດຮຽນ ແລະ ພຶດຕິກຳຕົວຈິງ.

ໂດຍການຮ່ວມມືກັບ ອົງການແຮງງານສາກົນ, ພາຍໃຕ້ການສະໜັບສະໜູນ ຂອງໂຄງການ ສະໜັບສະໜູນ ວິສາຫະກິດຂະໜາດນ້ອຍ ໃນສາມຫຼ່ຽມແມ່ນ້ຳຂອງ ( ILO - ISED ) ຈຶ່ງໄດ້ແປ ແລະ ຈັດພິມປື້ມຄູ່ມືເຫຼັ້ມນີ້ ເປັນພາສາລາວ, ທັງນີ້ ກໍ່ເພື່ອເຮັດໃຫ້ ປື້ມຄູ່ມື ດັ່ງກ່າວ ໄດ້ນຳໃຊ້ຢ່າງແຜ່ຫຼາຍ ໃນທ້ອງຖິ່ນຕ່າງໆ.

ແຕ່ເຖິງຢ່າງໃດກໍ່ຕາມ, ປື້ມຄູ່ມືຝຶກອົບຮົມເຫຼັ້ມນີ້ ແມ່ນໄດ້ແປຈາກພາສາອັງກິດ ກໍ່ອາດຈະປາສະຈາກ ຂໍ້ຂາດຕົກບົກຜ່ອງ ໃນດ້ານເນື້ອໃນ, ຄຳສັບ ຫຼື ການຈັດວາງຕ່າງໆ. ເມື່ອໃດຫາກຄູ່ມື ຫາກໄດ້ຮັບການນຳໃຊ້ ໃນການຝຶກອົບຮົມຕົວຈິງ ແລະ ເຫັນໄດ້ຂໍ້ຂາດຕົກບົກຜ່ອງ ຫຼື ມີຄວາມຈຳເປັນ ຈະຕ້ອງໄດ້ປັບປຸງບາງຈຸດ ເພື່ອໃຫ້ແທດເໝາະກັບສະພາວະຄວາມເປັນຈິງ ຂອງບ້ານເຮົາກໍ່ຈະໄດ້ມີການດັດແກ້ ແລະ ປັບປຸງໃຫ້ສົມ ບູນຂຶ້ນ ໃນການ ຈັດພິມ ໃນຄັ້ງຕໍ່ໄປ.

ໃນໂອກາດນີ້ ຂ້າພະເຈົ້າ ຂໍສະແດງຄວາມ ຂອບໃຈ ຕໍ່ ອົງການ ແຮງງານ ສາກົນ ແລະ ບັນດາຜູ້ຊ່ຽວຊານ ທີ່ໄດ້ຄົ້ນຄ້ວາ ແລະ ສ້າງ ປື້ມຄູ່ມືເຫຼັ້ມນີ້ ແລະ ນຳມາເຜີຍແຜ່ ໃນ ສ ປ ປ ລາວ.

ນະຄອນຫຼວງວຽງຈັນ, ວັນທີ 7 ກຸມພາ 2005
ສົມດີ ອິນມີໄຊ
ຮອງຫົວໜ້າກົມອຸດສາຫະກຳ

# ຄຳນຳ

ຊຸດການຝຶກອົບຮົມ ດ້ານບົດບາດຍິງຊາຍ ແລະ ການປະກອບກິດຈະການ ລວມກັນມີຊື່ວ່າ **ກ້າວໄປຂ້າງໜ້າສຳລັບແມ່ຍິງໃນວິສາຫະກິດ** ມີຈຸດປະສົງເພື່ອຊ່ວຍອົງການຈັດຕັ້ງຕ່າງໆ ດ້ານການພັດທະນາວິສາຫະກິດ ໃນການສົ່ງເສີມແມ່ຍິງທີ່ທຸກຍາກຜູ້ທີ່ຢາກເລີ່ມຕົ້ນທຸລະກິດ ຫລື ຜູ້ທີ່ກຳລັງດຳເນີນທຸລະກິດຂະໜາດນ້ອຍຢູ່. ຊຸດການຝຶກອົບຮົມ ກ້າວໄປຂ້າງໜ້າສຳລັບແມ່ຍິງໃນວິສາຫະກິດ ແຕກຕ່າງຈາກເອກະສານການຝຶກອົບຮົມທຸລະກິດ ທົ່ວໄປ ໂດຍເນັ້ນໜັກໃສ່ທັກສະດ້ານການປະກອບກິດຈະການທີ່ສຳຄັນຈາກທັດສະນະບົດບາດຍິງຊາຍ, ບໍ່ວ່າຈະ ແມ່ນສຳລັບຜູ້ຢາກເລີ່ມຕົ້ນ ຫລື ສຳລັບຜູ້ຢາກປັບປຸງທຸລະກິດສ່ວນບຸກຄົນ, ທຸລະກິດຄອບຄົວ ຫລື ທຸລະກິດຂອງກຸ່ມ. ມັນແກ້ໄຂຄວາມຈຳເປັນຕົວຈິງ ແລະ ຄວາມຈຳເປັນທີ່ເປັນຍຸດທະສາດຂອງແມ່ຍິງ ທີ່ມີລາຍຮັບຕ່ຳ ໃນວິສາຫະກິດ ດ້ວຍການເສີມສ້າງທັກສະພື້ນຖານດ້ານການຄຸ້ມຄອງບໍລິຫານທຸລະກິດ ແລະ ຄົນ. ມັນສະແດງໃຫ້ແມ່ຍິງເຫັນວິທີພັດທະນາຄຸນລັກສະນະດ້ານການປະກອບກິດຈະການຂອງເຂົາເຈົ້າ ແລະ ວິທີຮັບເອົາການ ສະໜັບສະໜູນຈາກກຸ່ມຕ່າງໆ, ຈາກເຄືອຂ່າຍ ແລະ ສະຖາບັນຕ່າງໆ ທີ່ເຮັດວຽກ ດ້ານການພັດທະນາວິສາຫະກິດ.

ຊຸດການຝຶກອົບຮົມນີ້ ສ່ອງແສງເຖິງ ແລະ ເພີ່ມຕື່ມໃສ່ຄວາມອຸດົມຮັ່ງມີດ້ານປະສົບການທີ່ມີຢູ່ແລ້ວຂອງອົງການ ILO, UNIFEM, GTZ ແລະ ອົງການຈັດຕັ້ງອື່ນໆ. ມັນໄດ້ນຳໃຊ້ບົດຮຽນຈາກເຄື່ອງມືທີ່ຄ້າຍຄືກັນ ທີ່ອົງການ ILO ພັດທະນາຂຶ້ນມາ ເຊັ່ນ: ການເລີ່ມຕົ້ນ ແລະ ພັດທະນາທຸລະກິດດ້ວຍຕົນເອງ ແລະ ແຜນ ງານດ້ານການເງິນສັງຄົມ, ແລະ ຍັງເຊື່ອມໂຍງໄປຍັງເອກະສານທີ່ສຳຄັນຂອງ ILO ອື່ນໆອີກ ເຊັ່ນ: ບັນດາເອກະສານກ່ຽວກັບ ການກໍ່ຕັ້ງສະມາຄົມ ແລະ ເງື່ອນໄຂການເຮັດວຽກທີ່ປອດໄພ ເຊິ່ງແມ່ນຄວາມເປັນຫ່ວງເປັນໄຍຕົ້ນຕໍ ສຳລັບຜູ້ປະກອບກິດຈະການແມ່ຍິງ, ໂດຍສະເພາະແລ້ວ ໃນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດນ້ອຍໆ ໃນຂະແໜງເສດຖະກິດທີ່ບໍ່ເປັນທາງການ.

ຊຸດການຝຶກອົບຮົມ **ກ້າວໄປຂ້າງໜ້າສຳລັບແມ່ຍິງໃນວິສາຫະກິດ** ສົ່ງເສີມການເພີ່ມອຳນາດ ດ້ານເສດຖະກິດ ແລະ ດ້ານສັງຄົມໃຫ້ແກ່ ແມ່ຍິງ ຄຽງຄູ່ກັບຜູ້ຊາຍໃນວິສາຫະກິດ:

- **ການເພີ່ມອຳນາດດ້ານເສດຖະກິດ,** ຍ້ອນວ່າໂດຍປົກກະຕິແລ້ວ ແມ່ຍິງຜູ້ທີ່ຢາກເຮັດວຽກສ້າງລາຍຮັບ ແມ່ນມີໂອກາດໄດ້ຮັບການສຶກສາ ແລະ ການຝຶກອົບຮົມໜ້ອຍ. ສ່ວນຫລາຍເຂົາເຈົ້າເຮັດວຽກໜັກກວ່າ ຜູ້ຊາຍ ເຖິງ 2 ຫລື 3 ເທົ່າ ເຊິ່ງມັນລວມເຖິງກິດຈະກຳສ້າງເສດຖະກິດ ແລະ ວຽກເບິ່ງແຍງເຮືອນຊານ ແລະ ການດູແລຄອບຄົວ. ເຂົາເຈົ້າຈຳເປັນຕ້ອງມີທັກສະດ້ານການຄຸ້ມຄອງ ບໍລິຫານ ແລະ ດ້ານການເຈລະຈາ ເພື່ອປ່ຽນຈາກກິດຈະກຳເພື່ອຄວາມຢູ່ລອດຂອງເຂົາເຈົ້າ ໄປເປັນ ທຸລະກິດທີ່ມີຜະລິດຕະພາບ ເພີ່ມຂຶ້ນ ແລະ ມີກຳໄລໃນໄລຍະຍາວ.

- **ການເພີ່ມອຳນາດດ້ານສັງຄົມ,** ຍ້ອນວ່າແມ່ຍິງໃນຫລາຍປະເທດ ມີສະຖານະພາບຕ່ຳກວ່າຜູ້ຊາຍ. ແມ່ຍິງສ່ວນຫລາຍເຮັດວຽກຕິດພັນກັບເຮືອນ, ຂາດການຕິດຕໍ່ພົວພັນກັບໂລກພາຍນອກ, ແລະ ມີອຸປະສັກດ້ານການເຄື່ອນຍ້າຍ ແລະ ດ້ານເຄືອຂ່າຍວຽກງານ. ດັ່ງນັ້ນ, ແມ່ຍິງຈຳເປັນຕ້ອງມີທັກສະດ້ານສ້າງຄວາມໝັ້ນໃຈ ແລະ ດ້ານສ້າງເຄືອຂ່າຍ, ຕ້ອງສາມາດໝັ້ນໃຈຕໍ່ການຕີລາຄາຕົນເອງ ແລະ ເພິ່ງພາ ຄວາມເຂັ້ມແຂງຂອງຕົນເອງ.

ຈຸດສຸມຕົ້ນຕໍຂອງຊຸດການຝຶກອົບຮົມ **ກ້າວໄປຂ້າງໜ້າ** ແມ່ນເລັ່ງໃສ່ຜູ້ປະກອບກິດຈະການຍິງ ແຕ່ກໍ່ບໍ່ໄດ້ແບ່ງແຍກຜູ້ຊາຍ. ຄຳເວົ້າທີ່ເວົ້າກັນທົ່ວໄປໃນທົ່ວໂລກແມ່ນວ່າ: *"ຜູ້ຊາຍຜູ້ໜຶ່ງທີ່ປະສົບຜົນສຳເລັດມັກຈະມີ ແມ່ຍິງຜູ້ໜຶ່ງທີ່ເຂັ້ມແຂງຢູ່ເບື້ອງຫຼັງ"*. ເຊັ່ນດຽວກັນ, ມັນກໍ່ມີຄວາມເປັນໄປໄດ້ໃນທາງປີ້ນກັນທີ່ວ່າ: ແມ່ຍິງ ເຊິ່ງເຮັດວຽກເປັນ ສ່ວນໜຶ່ງຂອງທຸລະກິດຄອບຄົວ ຫລື ເຮັດທຸລະກິດພຽງລຳພັງຄົນດຽວ ຫລື ເຮັດຮ່ວມກຸ່ມ ກັບແມ່ຍິງຄົນອື່ນໆ, ຜົນສຳເລັດຂອງເຂົາເຈົ້າຂຶ້ນກັບການໄດ້ຮັບແຮງສະໜັບສະໜູນຈາກຄອບຄົວຂອງເຂົາເຈົ້າ. ຍ້ອນແນວນັ້ນ, ຊຸດການຝຶກອົບຮົມນີ້ ບໍ່ແມ່ນສະເພາະແມ່ຍິງເທົ່ານັ້ນ, ແຕ່ແມ່ນເພື່ອຄວາມສະເໝີພາບ ຍິງ-ຊາຍ.

ວິທີການການຝຶກອົບຮົມແມ່ນ ແບບມີສ່ວນຮ່ວມ ແລະ ເນັ້ນໃສ່ການປະຕິບັດຕົວຈິງ ທີ່ນຳໃຊ້ປະສົບການຊີວິດຕົວຈິງຂອງຜູ້ເຂົ້າຮ່ວມ ແລະ ເສີມສ້າງຈາກປະສົບການເຫລົ່ານີ້ ໃຫ້ກາຍເປັນບົດຮຽນດ້ານການຄຸ້ມຄອງບໍລິຫານທຸລະກິດທີ່ດີກວ່າເກົ່າ. ນັກທຸລະກິດຍິງ ແລະ ນັກທຸລະກິດຊາຍ ລວມທັງສະມາຄົມທຸລະກິດຕ່າງໆຂອງເຂົາເຈົ້າ ແມ່ນການປະກອບສ່ວນທີ່ສຳຄັນໃນການຝຶກອົບຮົມ. ຊຸດການຝຶກອົບຮົມນີ້ ໄດ້ຮັບການ ອອກແບບເປັນໝວດຕ່າງໆແບບມີໂຄງສ້າງຄັກແນ່ ໂດຍມີບັນດາບົດຝຶກຫັດການຮຽນຮູ້ຈາກການປະຕິບັດຕົວຈິງ ເຊິ່ງເນັ້ນໜັກໃສ່ການພັດທະນາທຸລະກິດ ແລະ ສາຍພົວພັນລະຫວ່າງ ຍິງ-ຊາຍ. ມັນທ້ອນໂຮມຊັບພະຍາກອນ ແລະ ແນວຄວາມຄິດຕ່າງໆເຂົ້າໃນບົດຝຶກຫັດເຫລົ່ານັ້ນ ເຊິ່ງໄດ້ຮັບການຢັ້ງຢືນມາແລ້ວວ່າ ມີປະສິດທິຜົນ ແລະ ແທດເໝາະສຳລັບແມ່ຍິງທີ່ມີລາຍຮັບຕໍ່າ ຜູ້ເຊິ່ງມີລະດັບການສຶກສາໃນລະບົບຕໍ່າ ແລະ ສຳລັບຜູ້ຈັດການຂັ້ນສູງໃນພາກລັດ ແລະ ເອກະຊົນ. ກຸ່ມຄົນເຫລົ່ານີ້ປະເຊີນກັບຂໍ້ຫຍຸ້ງຍາກຄ້າຍຄືກັນເມື່ອ ເວົ້າເຖິງການຄຸ້ມຄອງບໍລິຫານ ເຊັ່ນ: ມີເວລາໜ້ອຍ ແລະ ຕ້ອງດຸ່ນດ່ຽງລະຫວ່າງ ຄວາມຮຽກຮ້ອງຕ້ອງການ ຕ່າງໆຫລາຍປະການທີ່ກົດດັນ ທາງດ້ານກຳລັງແຮງ ແລະດ້ານຄວາມຕັ້ງໃຈ.

ກ້າວໄປຂ້າງໜ້າສຳລັບແມ່ຍິງໃນວິສາຫະກິດ ໄດ້ລິເລີ່ມທົດລອງໃນປະເທດໄທ ໃນປີ 2001. ຊຸດການຝຶກອົບຮົມນີ້ໄດ້ຂະຫຍາຍອອກ ແລະ ທົດລອງນຳໃຊ້ໃນປະເທດ ກຳປູເຈຍ ແລະ ສປປ ລາວ ໃນປີ 2003. ທີມງານຂອງ ILO ທີ່ເຮັດວຽກກ່ຽວກັບບັນຫາກຳມະກອນຍິງ ແລະ ບົດບາດຍິງຊາຍ ປະຈຳຫ້ອງການ ILO ປະຈຳອານຸ ພາກພື້ນອາຊີອາຄະເນ (SRO-ບາງກອກ) ແລະ ທີມງານພັດທະນາການປະກອບກິດຈະການ ແລະ ຄວາມສະເໝີພາບຍິງຊາຍ (WEDGE) ຂອງແຜນງານ InFocus ໃນການກະຕຸ້ນການສ້າງວຽກເຮັດງານທຳໂດຍຜ່ານ ການພັດທະນາວິສາຫະກິດຂະໜາດນ້ອຍ (IFP/SEED) ເປັນຜູ້ລິເລີ່ມ. ພວກເຮົາຂໍຂອບ ໃຈນຳ ທ່ານ ເນລຽນ ຮາຊແປລ, ທ່ານ ແກຣີ ຟິນເນການ ແລະ ທ່ານ ຊູຊານ ບາວເອີ ສຳລັບຄຳເຫັນ ແລະ ການຊີ້ນຳ ນຳພາການຜະລິດຊຸດການຝຶກອົບຮົມນີ້. ພວກເຮົາຂໍສະແດງຄວາມຮູ້ບຸນຄຸນມາຍັງ ລັດຖະບານ ໄອແລນ, ລັດຖະບານຍີ່ປຸ່ນ ແລະ ລັດຖະບານອັງກິດ ສຳລັບການຊ່ວຍເຫລືອດ້ານການເງິນ, ເຊິ່ງເສີມໃສ່ກັບ ການປະກອບສ່ວນດ້ານວິຊາການ ແລະ ດ້ານການເງິນຂອງອົງການ ILO. ຫວັງວ່າຫລາຍໆອົງກອນຄູ່ ຮ່ວມງານ ຂອງອົງການ ILO ຈະພົບວ່າ **ກ້າວໄປຂ້າງໜ້າ** ມີປະໂຫຍດໃນການໃຫ້ການສະໜັບສະໜູນ ທີ່ມີປະສິດທິຜົນ ແກ່ກຸ່ມຜູ້ດ້ອຍໂອກາດ, ແລະ ໃນການປັບປຸງຄຸນນະພາບຂອງວຽກງານ ແລະ ຄຸນນະພາບ ຊີວິດຂອງເຂົາເຈົ້າ.

ມີນາ 2004, ບາງກອກ ແລະ ເຈເນວາ

ຄຣິສຕຽນ ອີວານ-ຄລ໊ອກ
ອຳນວຍການ
ຫ້ອງການປະຈຳອານຸພາກພື້ນອາຊີອາຄະເນ
ອົງການແຮງງານສາກົນ, ບາງກອກ

ໄມເຄີລ ແຮນຣິເກສ
ອຳນວຍການ
ພະແນກການສ້າງວຽກເຮັດງານທຳ ແລະ
ພັດທະນາວິສາຫະກິດ
ອົງການແຮງງານສາກົນ, ເຈເນວາ

# ບົດກ່າວຂອບໃຈ

ຜູ້ຂຽນຢາກສະແດງຄວາມຂອບໃຈມາຍັງຜູ້ເຂົ້າຮ່ວມຊຸດຝຶກອົບຮົມຄູຝຶກກ່ຽວກັບ ກ້າວໄປຂ້າງໜ້າສຳລັບແມ່ຍິງໃນວິສາຫະກິດ ທີ່ປະເທດກຳປູເຈຍ ແລະ ສປປ ລາວ ໃນປີ 2003 ແລະ ໃນປະເທດໄທ ໃນປີ 2001 ທຸກໆຄົນ; ຂອບໃຈມາຍັງເພື່ອນຮ່ວມງານ ແລະ ຄູຝຶກຮ່ວມ ຈາກອົງການ ILO ບາງກອກ ແລະ ຈາກໂຄງການຕ່າງໆຂອງ ILO ໃນພາກພື້ນ; ແລະ ມາຍັງຄູຝຶກຮ່ວມພາຍໃນ ແລະ ນັກທຸລະກິດຍິງທັງຫລາຍ. ເຊັ່ນດຽວກັນ ກໍ່ຂອບໃຈມາຍັງຜູ້ນຳ, ລັດຖະບານ ແລະ ຜູ້ນຳຂອງອົງການທີ່ບໍ່ແມ່ນລັດຖະບານ ທີ່ຮັບຜິດຊອບວຽກງານການຫລຸດຜ່ອນຄວາມທຸກຍາກ ແລະ ຍຸດທະສາດດ້ານການເພີ່ມອຳນາດໃຫ້ແມ່ຍິງ ແລະ ບັນດາທີ່ປຶກສາດ້ານທຸລະກິດ, ບັນດາຊ່ຽວຊານດ້ານບົດບາດຍິງຊາຍ ແລະ ບັນດາບຸກຄົນ ແລະ ອົງການຈັດຕັ້ງອື່ນໆທີ່ແລກປ່ຽນປະສົບການ ແລະ ເອກະສານຂອງເຂົາເຈົ້າກັບພວກເຮົາ.

ການປະກອບສ່ວນຂອງໂຄງການ ຈາກພາກພື້ນອາຊີ ລວມມີ ແຜນງານຮ່ວມມືພັດທະນາ ລະຫວ່າງອົງການ ILO ແລະ ໄອແລນ (DCI); ແຜນງານຮ່ວມມືລະຫວ່າງ ILO ແລະ ຍີ່ປຸ່ນດ້ານ: ການຂະຫຍາຍໂອກາດໃນການສ້າງວຽກເຮັດງານທຳສຳລັບແມ່ຍິງ ໃນກຳປູເຈຍ (EEOW) ແລະ ໄທ; ແລະ ໂຄງການປະຈຳອານຸພາກພື້ນລຸ່ມແມ່ນ້ຳຂອງ ຕ້ານການຄ້າເດັກ ແລະ ແມ່ຍິງ (TICW) ເຊິ່ງນອນຢູ່ໃນແຜນງານເພື່ອລົບລ້າງການຄ້າແຮງງານເດັກສາກົນ (IPEC) ໃນ ສປປ ລາວ ແລະ ໄທ.

ຫລາຍໆຄົນ ໄດ້ສະຫລະເວລາຂອງເຂົາເຈົ້າ ແລະ ສຸມຄວາມພະຍາຍາມສຸດຂີດເພື່ອພັດທະນາຊຸດການຝຶກອົບຮົມນີ້, ໂດຍສ່ວນຫລາຍແມ່ນເຮັດນອກເໜືອຈາກໜ້າວຽກຂອງເຂົາເຈົ້າ. ຂໍສະແດງຄຳຂອບໃຈເປັນພິເສດມາຍັງ: ທ່ານ ສຸກັນຍາ ວໍຣະດິລົກກູລ, ທ່ານ ບຸສະກອນ ສຸຣິຍາສານ, ທ່ານ ອາຍາ ມັດສຸອຸຣາ, ທ່ານ ລິນດາ ດີແລນ, ທ່ານ ປີຢາມາລ ພິໄຊວົງເສ, ທ່ານ ໂສ ເລ ອ໋ອງ, ທ່ານ ແມັກສ ອີອາໂກໂນ, ທ່ານ ອາຣິຕາ ຈະເຣີນສຸກ, ທ່ານ ສຸພິນດາ ມົງຄົນສຸກສະຫວັດ ແລະ ທ່ານ ລຸຍສ ບຸນສິນສຸກ ທີ່ປະເທດໄທ; ທ່ານ ທິມ ໄດສ, ທ່ານ ມາເຣຍ-ໂຈສ ບາຣນີ ແລະ ທ່ານ ອາເກມີ ເສຣີຊາວາ ທີ່ ເຈເນວາ; ທ່ານ ຍົງ ວິນ, ທ່ານ ຈິ ໂສວັນນາ, ທ່ານ ນິວານາ ແຈງ, ທ່ານ ລິມ ໄພ ແລະ ທ່ານ ບຸນຈິດ ເວສນາ ທີ່ ປະເທດກຳປູເຈຍ; ທ່ານ ມະນີໂຊດ ບຸດດາຄຳ, ທ່ານ ແສງມະນີ ວິຍະເກດ, ທ່ານ ພິມພອນ ສິງສຸລິຍາ, ທ່ານ ອິນທະສອນ ເພັດສີຣິແສງ ແລະ ທ່ານ ເພັດພິມ ຈຳປາສິດ ທີ່ ສປປ ລາວ; ທ່ານ ແຈນສ ຄຣິສເຕັນເຊັນ ທີ່ ຮ່າໂນ້ຍ; ທ່ານ ມາເຣຍ ໂຈສ ບາຣນີ; ແລະ ຄູ່ຮ່ວມງານຂອງພວກເຮົາ ທ່ານ ຊາບິນ ແບກເກີ, ທ່ານ ປາຕຣິເຊຍ ຟິນເນການ ແລະ ທ່ານ ຮານຊ ມັດຕລາ.

ສຳລັບການຈັດທຳປຶ້ມຄູ່ມືພາກພາສາລາວ ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາຍັງ ທ່ານ ນາງ ທິບພາພອນ ເພັດມະນີ, ທ່ານ ຖະໜອມວົງ ຄຳວົງສາ, ທ່ານ ນາງ ນົງນຸດ ດາວທອງ ແລະ ທ່ານ ວິໄຊ ໄຊຍະວົງສາ ຈາກ ບໍລິສັດທີ່ປຶກສາ ດ້ານການພັດທະນາ ວິສາຫະກິດຈຳກັດ. ນອກນີ້ ຍັງມີ ທ່ານ ສີທາລາ ປະທຳມະວົງ, ທ່ານ ສົມສັກ ຈັນດາລາ, ທ່ານ ນາງ ໄຊມະໂນ ຊານຸບານ ແລະ ທ່ານ ນາງ ເພັດພິມ ຈຳປາສິດ ຈາກ ອົງການ ILO ວຽງຈັນ ສຳລັບການແປ, ດັດແກ້ ແລະ ການຝຶກອົບຮົມຄູຝຶກ ມານະໂອກາດນີ້ດ້ວຍ.

*ຊູຊານ ບາວເອີ, ແກຣີ ຟິນເນກັນ ແລະ ເນລຽນ ຮາຊແປລ*

*ພຶດສະພາ 2004, ເບີລິນ, ເຈເນວາ ແລະ ບາງກອກ*